**11. ບໍລິສັດບໍລິຫານຊັບສິນ ແມ່ນຫຍັງ?**

ບໍລິສັດບໍລິຫານຊັບສິນ ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບ ທີ່ດຳເນີນທຸລະກິດກ່ຽວກັບການສ້າງຕັ້ງ ແລະ ບໍລິຫານກອງທຶນຮ່ວມ, ພ້ອມທັງບໍລິຫານຊັບສິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ.

ໜ້າທີ່ຕົ້ນຕໍຂອງບໍລິສັດບໍລິຫານຊັບສິນ ແມ່ນ ດຳເນີນການຂາຍ, ໄຖ່ຖອນຄືນໜ່ວຍລົງທຶນ ແລະ ຈົດທະບຽນໜ່ວຍລົງທຶນໃນຕະຫຼາດຫຼັກຊັບ; ປະຕິບັດກົດລະບຽບຂອງກອງທຶນຮ່ວມ, ສັນຍາດູແລຊັບສິນ, ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ແລະ ປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ; ດຳເນີນການກວດສອບບັນຊີຂອງກອງທຶນຮ່ວມ, ລາຍງານ ແລະ ເປີດເຜີຍຂໍ້ມູນກ່ຽວກັບກອງທຶນຮ່ວມ; ປະຕິບັດລະບອບການບັນຊີ, ການກວດສອບ, ສະຖິຕິ ແລະ ພັນທະທາງການເງິນອື່ນໆ.

ປະຈຸບັນ ໃນ ສປປ ລາວ ຍັງບໍ່ທັນໄດ້ມີການສ້າງຕັ້ງ ບໍລິສັດບໍລິຫານຊັບສິນ. ແຕ່ອີງໃສ່ການພັດທະນາຢ່າງຕໍ່ເນື່ອງຂອງຕະຫຼາດທຶນລາວ, ເຊື່ອໝັ້ນວ່າໃນອານາຄົດອັນໃກ້ນີ້ ກໍ່ຈະມີການສ້າງຕັ້ງບໍລິສັດບໍລິຫານຊັບສິນຂຶ້ນຄືກັບບັນດາປະເທດໃນພາກພື້ນ ກໍ່ຄື ສາກົນຢ່າງແນ່ນອນ.